PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ໜັງສືແຈ້ງ / Notice

ວັນທີ/Dated: 16/03/2026

ເລກທີ/No...011...../PTL.2026

ຮຽນເຖິງ: **ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;**
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ; ແລະ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

To: **Secretary - General of the Lao Securities Commission Office;**
The CEO of the Lao Security Exchange; and
Shareholders of Petroleum Trading Lao Public Company.

ເລື່ອງ: **ການຊີ້ແຈງການເໜັງຕີງຂອງລາຄາຮຸ້ນ**

Subject: **Clarification Share Price Volatility**

- ອີງຕາມຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;

  Pursuant to the Decision on Reporting and Disclosure of the Lao Securities Commission No. 15/LSC dated 11 December 2024;

- ອີງຕາມລະບຽບວ່າດ້ວຍ ການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.
  Pursuant to the Disclosure Regulation of the Lao Securities Exchange No. 008/LSX dated 27 September 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (“**ບໍລິສັດ**” ຫຼື “**ປທລ**”) ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບ ການຊີ້ແຈງການເໜັງຕີງຂອງລາຄາຮຸ້ນ ດັ່ງລາຍລະອຽດລຸ່ມນີ້:

Petroleum Trading Lao Public Company (“**Company**” or “**PTL**”) would like to notify the Clarification Share Price Volatility as follows:

ການຮັບຊາບກ່ຽວກັບການເຄື່ອນໄຫວຂອງຕະຫຼາດ / Acknowledgment of Market Activity

ປທລ ໄດ້ຕິດຕາມ ແລະ ຮັບຊາບກ່ຽວກັບການເພີ່ມຂຶ້ນຢ່າງຜິດປົກກະຕິຂອງປະລິມານການຊື້-ຂາຍ ແລະ ການເໜັງຕີງຂອງລາຄາຮຸ້ນຂອງບໍລິສັດໃນໄລຍະຜ່ານມາ. ປທລ ເຂົ້າໃຈດີວ່າ ສະພາບການດັ່ງກ່າວແມ່ນມີສ່ວນກ່ຽວຂ້ອງໂດຍກົງກັບຄວາມຕ້ອງການນ້ຳມັນເຊື້ອໄຟທີ່ເພີ່ມສູງຂຶ້ນໃນສັງຄົມ ແລະ ຄວາມຈຳກັດຂອງການສະໜອງນ້ຳມັນໃນຕະຫຼາດ, ເຊິ່ງສິ່ງຜົນໃຫ້ມີນັກລົງທຶນຈຳນວນຫຼາຍໃຫ້ຄວາມສົນໃຈເຂົ້າຊື້ຮຸ້ນຂອງບໍລິສັດ.

PTL has noted a significant increase in the trading volume and price volatility of our shares recently. PTL understand that this is largely driven by the current societal demand for fuel and the perceived limitations of supply within the local fuel market, leading to a surge in investor activity.

PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ສະພາບການດຳເນີນງານໃນປັດຈຸບັນ / Current Operational Update

ເຖິງແມ່ນວ່າຄວາມສົນໃຈຈາກນັກລົງທຶນ ຈະສະທ້ອນໃຫ້ເຫັນເຖິງຄວາມເຊື່ອໝັ້ນຕໍ່ບົດບາດຂອງບໍລິສັດ ໃນຖານະຜູ້ສະໜອງນ້ຳມັນເຊື້ອໄຟຫຼັກ, ແຕ່ບໍລິສັດ ຂໍຊີ້ແຈງໃຫ້ຊາບວ່າ ປທລ ພວມສຸມທຸກຄວາມພະຍາຍາມ ຮ່ວມກັບ ຄູ່ຄ້າສາກົນ ແລະ ຂະແໜງການລັດທີ່ກ່ຽວຂ້ອງ ເພື່ອບໍລິຫານຈັດການການນຳເຂົ້າ ແລະ ຈຳໜ່າຍນ້ຳມັນ ໃຫ້ມີຄວາມຕໍ່ເນື່ອງ ໃນສະຖານະການຂໍ້ຈຳກັດຂອງຕະຫຼາດໃນພາກພື້ນ. ເປົ້າໝາຍຕົ້ນຕໍຂອງ ປທລ ແມ່ນການ ກະຈາຍນ້ຳມັນທີ່ມີຢູ່ໃຫ້ທົ່ວເຖິງ ເພື່ອຮັບປະກັນໃຫ້ຂະແໜງການບໍລິການ ແລະ ສັງຄົມໂດຍລວມໄດ້ຮັບຜົນກະທົບ ໜ້ອຍທີ່ສຸດ.

While the rise in investor interest reflects confidence in PTL's role as a key fuel provider, PTL wish to clarify our current position. PTL are working tirelessly with our international partners and the relevant authorities to maintain a steady flow of fuel despite regional market constraints. Our primary focus remains on the strategic distribution of existing reserves to ensure that essential services and the general public remain supported throughout this period.

ດັ່ງນັ້ນ, ປທລ ຈຶ່ງຮຽນມາຍັງທ່ານເພື່ອຮັບຊາບ ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

Therefore, Please be informed accordingly. Yours respectfully,

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company
ນະຄອນ ຫຼວງ ວຽງຈັນ

ທ່ານ ຄຳສອນ ສິດທິໄຊ / Mr. Khamsone SITTHIXAY
ຮອງປະທານສະພາຜູ້ບໍລິຫານ / Vice Chairman